**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກກະສິກຳ ແລະ ປ່າໄມ້

ເລກທີ 778 /ກປ.ນວ

ນະຄອນຫຼວງວຽງຈັນ, ວັນທີ 23 FEB 2024

**ຮຽນ:** ທ່ານ ຫົວໜ້າຫ້ອງການພັດທະນາ ແລະ ຄຸ້ມຄອງ ຄອງນ້ຳວຽງຈັນ.

**ເລື່ອງ:** ຂໍລາຍງານກ່ຽວກັບບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ ສະເໜີຂໍລວງຄອງລະບາຍນ້ຳທີ່ຕື້ນເຂີນ ແລະ ອຸດຕັນ ເຂດບ້ານດົງຄຳຊ້າງ ແລະ ບ້ານໜອງໄຮ ເມືອງຫາດຊາຍຟອງ.

- ອີງຕາມ ຂໍ້ຕົກລົງຂອງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ, ສະບັບເລກທີ 238/ຈນວ, ລົງວັນທີ 06 ມີນາ 2023 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ;
- ອີງຕາມ ຂໍ້ຕົກລົງ ຂອງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 0966/ຈນວ, ລົງວັນທີ 11 ພະຈິກ 2019. ວ່າດ້ວຍການພັດທະນາ ແລະ ຄຸ້ມຄອງເຂດສະຫງວນຄອງນ້ຳວຽງຈັນ;
- ອີງຕາມ ໜັງສືສະເໜີ ຂອງບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ ສະບັບເລກທີ 0289/ສສ, ລົງວັນທີ 01 ທັນວາ 2023;
- ອີງຕາມ ບົດບັນທຶກກອງປະຊຸມ ການປຶກສາຫາລືສັງລວມບັນດາໜ້າວຽກຕ່າງໆຂອງແຕ່ລະຂະແໜງການທີ່ຕິດພັນກັບຄອງນ້ຳວຽງຈັນ ຄັ້ງວັນທີ 05 ມັງກອນ 2024;
- ອີງຕາມ ບົດບັນທຶກກອງປະຊຸມ ການປຶກສາຫາລື ແລະ ລົງກວດກາພື້ນທີ່ຄອງລະບາຍນ້ຳ ເຂດບ້ານດົງຄຳຊ້າງ ແລະ ບ້ານໜອງໄຮ ເມືອງຫາດຊາຍຟອງ ຄັ້ງວັນທີ 11 ມັງກອນ ແລະ 30 ມັງກອນ 2024.

ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບວ່າ: ກ່ຽວກັບບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ ສະເໜີຂໍລວງຄອງລະບາຍນ້ຳທີ່ຕື້ນເຂີນ ແລະ ອຸດຕັນ ເຂດບ້ານດົງຄຳຊ້າງ ແລະ ບ້ານໜອງໄຮ ເມືອງຫາດຊາຍຟອງ ເຊິ່ງມີລາຍລະອຽດດັ່ງນີ້:

**I. ສະພາບລວມ:**

1. ພາຍຫຼັງທີ່ໄດ້ຮັບໜັງສືສະເໜີຂອງບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ, ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ກໍ່ໄດ້ແຕ່ງຕັ້ງໃຫ້ພະນັກງານວິຊາການລົງກວດກາພາກສະໜາມຕົວຈິງ;
2. ໄດ້ສະເໜີຫາຫ້ອງການພັດທະນາ ແລະ ຄຸ້ມຄອງ ຄອງນ້ຳວຽງຈັນ ແລະ ໄດ້ຮັບທິດຊີ້ນຳໃຫ້ລົງກວດກາພາກສະໜາມເພື່ອເກັບກຳຂໍ້ມູນຢ່າງລະອຽດ ແລ້ວເຮັດໜັງສືລາຍງານຫາທ່ານເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອຂໍຄຳເຫັນ ແລະ ຂໍທິດຊີ້ນຳ ໃນການຈັດຕັ້ງປະຕິບັດ;
3. ຜ່ານການລົງເກັບກຳຂໍ້ມູນ, ສຳຫຼວດ-ວັດແທກ ຄອງລະບາຍນ້ຳ ຄອງນ້ຳວຽງຈັນ ຢູ່ຈຸດດັ່ງກ່າວ ແມ່ນມີຂອບເຂດກວມເອົາ 2 ບ້ານຄື: ບ້ານດົງຄຳຊ້າງ ແລະ ບ້ານໜອງໄຮ ເມືອງຫາດຊາຍຟອງ ມີຄວາມຍາວທັງໝົດ 350 ແມັດ, ຄວາມກວ້າງມີ 2 ຂະໜາດຄື: ກວ້າງ 50 ແມັດ; ກວ້າງ 70 ແມັດ ແລະ ມີເນື້ອທີ່ທັງໝົດ 20.970,67 ຕາ

ແມັດ, ຕອນດິນທີ່ນອນຢູ່ໃນຄອງລະບາຍນ້ຳເຂດດັ່ງກ່າວ ແມ່ນເປັນຂອງທ່ານ ດຣ. ກຸງ ທັງໝົດ. ຂອບເຂດດັ່ງກ່າວ ເຫັນວ່າສະພາບຍັງບໍ່ທັນໄດ້ຈີກເປັນຄອງເທື່ອ ແລະ ຍັງເປັນດິນທາມທີ່ຕື້ນເຂີນ, ນ້ຳໄຫຼບໍ່ສະດວກ; ຈຳເປັນຕ້ອງມີການລອງ, ຈີກເປັນຄອງລະບາຍນ້ຳ ຕາມມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້;

4. ຄອງລະບາຍນ້ຳ ຄອງນ້ຳວຽງຈັນ ຢູ່ຈຸດດັ່ງກ່າວ ແມ່ນນອນຢູ່ໃນເຂດເຊົ່າສຳປະທານຂອງບໍລິສັດ ມິດຕະພາບພັດທະນາການກະເສດ ຈຳກັດ (ຟາມກາບຊ້ອນ) ຈຳນວນ 70 ປີ. ບໍລິສັດດັ່ງກ່າວແມ່ນບໍ່ເຫັນດີໃຫ້ພາກສ່ວນອື່ນເຂົ້າມາພັດທະນາລອງຄອງລະບາຍນ້ຳໃນຂອບເຂດທີ່ດິນເຊົ່າສຳປະທານ, ຖ້າຫາກວ່າຈະລອງຄອງນ້ຳເຂດດັ່ງກ່າວແທ້ ທາງບໍລິສັດ ມິດຕະພາບພັດທະນາການກະເສດ ຈຳກັດ ແມ່ນຈະຂໍເປັນຜູ້ຈັດຕັ້ງປະຕິບັດໃນການລອງຄອງນ້ຳເອງ ໂດຍສົມທົບກັບຜູ້ມີສ່ວນຮ່ວມກໍ່ຄືເຈົ້າຂອງດິນທີ່ມີໃບຕາດິນ;

5. ທ່ານ ດຣ. ກຸງ ເຈົ້າຂອງຕອນດິນ ແມ່ນເຫັນດີໃນການຂໍພັດທະນາລອງຄອງລະບາຍນ້ຳຂອງບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ, ແຕ່ຖ້າບໍລິສັດ ມິດຕະພາບພັດທະນາການກະເສດ ຈຳກັດ (ຟາມກາບຊ້ອນ) ຈະຂໍພັດທະນາເອງນັ້ນ ແມ່ນທ່ານ ດຣ. ກຸງ ເຈົ້າຂອງຕອນດິນບໍ່ເຫັນດີ;

6. ໃນຊ່ວງຕົ້ນປີ 2023 ບໍລິສັດ ສຸກທະວີໄຊ ຂົນສົ່ງ ຈຳກັດຜູ້ດຽວ ກໍ່ໄດ້ເຄີຍສະເໜີຂໍອະນຸຍາດລອງຄອງລະບາຍນ້ຳຈຸດດັ່ງກ່າວ ແຕ່ຂັ້ນເທິງຍັງບໍ່ທັນເຫັນດີອະນຸຍາດໃຫ້ຈັດຕັ້ງປະຕິບັດເທື່ອ.

**II. ທັດສະນະທາງດ້ານວິຊາການ:**

1. ໂດຍລວມແມ່ນເຫັນດີຕາມການສະເໜີຂອງບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ ທີ່ສະເໜີຂໍອະນຸຍາດລອງຄອງລະບາຍນ້ຳທີ່ຕື້ນເຂີນ ແລະ ອຸດຕັນ ເຂດບ້ານດົງຄຳຊ້າງ ແລະ ບ້ານໜອງໄຮ ເມືອງຫາດຊາຍຟອງ ລົງສູ່ຮ່ອງລະບາຍນ້ຳຂອງໂຮງງານເບຍລາວ ແລະ ລົງສູ່ແມ່ນ້ຳຂອງ ເພື່ອເຮັດໃຫ້ການໄຫຼຂອງນ້ຳສະດວກຂຶ້ນ ແລະ ຫຼີກລ້ຽງບັນຫານ້ຳຖ້ວມຂັງຕ່າງໆໃນອານາຄົດ.

2. ແຜນການຈັດຕັ້ງປະຕິບັດວຽກງານລອງຄອງລະບາຍນ້ຳຂອງບໍລິສັດແມ່ນຈະຈີກດິນຄອງລະບາຍນ້ຳທີ່ຕື້ນເຂີນ ແລະ ອຸດຕັນ ມາຖົມເຂດໃກ້ບໍລິເວນຄອງລະບາຍນ້ຳດັ່ງກ່າວ ໂດຍຈະບໍ່ເຄື່ອນຍ້າຍດິນອອກໄປພາຍນອກເດັດຂາດ. ເຫັນວ່າເປັນເງື່ອນໄຂທີ່ດີ ເພາະຈະບໍ່ມີຫາງສຽງທາງສັງຄົມໃນການເຮັດໃຫ້ເສັ້ນທາງບໍ່ເປິະເປື້ອນ, ບໍ່ມີຂີ້ຝຸ່ນລົບກວນພໍ່ແມ່ປະຊາຊົນຕາມຊຸມຊົນ ແລະ ບໍ່ເກີດມີບັນຫາການສັນຈອນຕາມເສັ້ນທາງແອອັດ.

3. ບໍລິສັດ ແສນສົມ ສຳຫຼວດອອກແບບ ແລະ ກໍ່ສ້າງ ຈຳກັດຜູ້ດຽວ ແມ່ນມີຄວາມພ້ອມໃນດ້ານງົບປະມານ ແລະ ກົນຈັກຄົບຖ້ວນ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ສຳເລັດກ່ອນລະດູຝົນທີ່ຈະມາເຖິງນີ້.

4. ສຳລັບຮູບແບບໃນການຂໍປະກອບສ່ວນລອງຄອງລະບາຍນ້ຳນີ້ ທາງພາກລັດແມ່ນຂາດງົບປະມານຮັບໃຊ້ໃນວຽກງານດັ່ງກ່າວ, ສະນັ້ນ ຈຶ່ງມອບໃຫ້ເປັນຄວາມຮັບຜິດຊອບຂອງບໍລິສັດເອງ ໃນດ້ານງົບປະມານ ແຕ່ການລອງຄອງລະບາຍນ້ຳ ຕ້ອງໄປຕາມເຕັກນິກທີ່ໄດ້ກຳນົດໄວ້ຢູ່ຂໍ້ຕົກລົງສະບັບເລກທີ 0966/ຈນວ, ລົງວັນທີ 11 ພະຈິກ 2019.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ ແລະ ຂໍທິດຊີ້ນຳ ໃນການຈັດຕັ້ງປະຕິບັດ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ຮມ ຫົວໜ້າພະແນກ

ອາດສະພາ ສີຈະເລີນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ແສນສົມ ສໍາຫຼວດອອກແບບ ແລະ ກໍ່ສ້າງ ຈໍາກັດຜູ້ດຽວ

ເລກທີ 0289/ສສ

ເບີໂທ: 020 55555707

ວັນທີ 01/12/2023

# ໜັງສືສະເໜີ

**ຮຽນ:** ທ່ານຫົວໜ້າພະແນກ ກະສິກໍາ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ, ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

**ເລື່ອງ:** ສະເໜີຂໍລວງຮ່ອງລະບາຍນໍ້າ ເຂດບ້ານດົງຄໍາຊ້າງ ເມືອງ ຫາດຊາຍຟອງ ນະຄອນຫຼວງວຽງຈັນ.

ຂ້າພະເຈົ້າ ທ້າວ ຈັນທະວອນ ສຸດທິອາດ ໃນນາມ ປະທານບໍລິສັດ ແສນສົມ ສໍາຫຼວດ-ອອກແບບ ແລະ ກໍ່ສ້າງ ຈໍາກັດຜູ້ດຽວ : ຂໍຖືເປັນກຽດຮຽນສະເໜີມາຍັງທ່ານຫົວໜ້າພະແນກ ກະສິກໍາ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ຮັບຊາບວ່າ: ເພື່ອສະແດງເຈດຈໍານົງໃນການຂໍອະນຸຍາດລວງຮ່ອງລະບາຍນໍ້າເຂດ ບ້ານ ດົງຄໍາຊ້າງ ເມືອງ ຫາດຊາຍຟອງ ນະຄອນຫຼວງວຽງຈັນ, ສ່ວນຄ່າໃຊ້ຈ່າຍຕ່າງໆທາງບໍລິສັດຈະເປັນຜູ້ຮັບຜິດຊອບທັງໝົດ .

ສະນັ້ນ, ຈຶ່ງໄດ້ຮຽນສະເໜີມາຍັງທ່ານຫົວໜ້າພະແນກ ກະສິກໍາ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ຊ່ວຍຄົ້ນຄວ້າ ແລະ ພິຈາລະນາຕາມຄວາມເໝາະສົມດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

**ບໍລິສັດ ແສນສົມ ສໍາຫຼວດອອກແບບ ແລະ ກໍ່ສ້າງ ຈໍາກັດຜູ້ດຽວ**

SAENSOM SUREY DISIGN & CONSTRUCTION SOLE CO.,LTD

**ຈັນທະວອນ ສຸດທິອາດ**